ໂຄງການເຊື່ອມໂຍງສິ່ງແວດລ້ອມ ເຂົ້າໃນກົດຈະກຳແກ້ໄຂຄວາມທຸກຍາກ (ຊສທ) ຢູ່ ສປປ ລາວ

ບົດລາຍງານຫຍໍ້ ສະບັບທີ 05/2010:

ການລົງທຶນໃນການຜະລິດນ້ຳມັນເຊື້ອໄຟຊີວະພາບ

ຊຸດບົດລາຍງານຫຍໍ້ທາງດ້ານນະໂຍບາຍນີ້ແມ່ນໄດ້ຂຽນຂຶ້ນໂດຍໂຄງການເຊື່ອມໂຍງສິ່ງແວດລ້ອມ ເຂົ້າໃນກົດຈະກຳຫຼຸດຜ່ອນຄວາມທຸກຍາກ ຂອງ ສປປ ລາວ ເພື່ອຊີ້ໃຫ້ເຫັນເຖິງບັນຫາດ້ານຄວາມທຸກຍາກ ແລະ ສິ່ງແວດລ້ອມໃນປະຈຸບັນ ແລະ ຂະບວນການວາງແຜນການໃນລະດັບຊາດ. ຈຸດປະສົງຂອງບົດລາຍງານຫຍໍ້ນີ້ແມ່ນເພື່ອໃຫ້ຂໍ້ມູນທີ່ເນັ້ນໃຫ້ເຫັນເຖິງຫຼັກຖານ ແລະ ທາງເລືອກທາງດ້ານນະໂຍບາຍໃນທາງປະຕິບັດ ເພື່ອສະໜັບສະໜູນການຫັນປ່ຽນທາງດ້ານເສດຖະກິດ ຂອງ ລາວ ໄປສູ່ເສັ້ນທາງການພັດທະນາ ແບບຍືນຍົງສຳລັບຜູ້ທຸກຍາກທີ່ສຸດ.

ເອກະສານຕີພິມຜ່ານມາ:

01/2010:ພ້ອມກັນພັດທະນາເປົ້າໝາຍ ເພື່ອການ ພັດທະນາແບບຍືນຍົງ

02/2010: ການນຳເອົາຕົວວັດແທກທາງດ້ານ ຄວາມທຸກຍາກ-ສິ່ງແວດລ້ອມສຳລັບການ ຕິດຕາມແລະປະເມີນຜົນເປົ້າ ໝາຍການເຕີບໂຕແບບຍືນຍົງ

03/2010:ການໃຫ້ອຳນາດທາງດ້ານເສດ ຖະກິດຂອງແມ່ຍິງ ແລະ ການລົງທຶນ

04/2010: ຜົນກະທົບທາງດ້ານ ເສດຖະ ກິດ, ສັງຄົມ ແລະ ສິ່ງແວດລ້ອມຈາກ ການລົງທຶນ ປູກໄມ້

ເອກະສານຕີພິມໃນຕໍ່ໜ້າ:

- *ຜົນກະທົບທາງດ້ານເສດຖະກິດ, ສັງຄົມ ແລະ ສິ່ງແວດລ້ອມຂອງຂະແໜງການລົງທຶນທີ່ ສຳຄັນອື່ນໆ*

ສັງລວມຫຍໍ້ ການເກີດມີຄວາມກັງວົນ ກ່ຽວກັບຄວາມໝັ້ນຄົງທາງດ້ານພະລັງງານ, ການປ່ຽນແປງດິນຟ້າອາກາດ ແລະ ພະລັງງານ ເພື່ອການພັດທະນາຊົນນະບົດ ນັ້ນມັນ ເປັນການຂັບເຄື່ອນໄປສູ່ການເພີ່ມຄວາມສົນໃຈໃນດ້ານພະລັງງານຊີວະພາບຢູ່ໃນທົ່ວໂລກ ເຊິ່ງກໍ່ລວມໄປເຖິງ ນ້ຳມັນເຊື້ອໄຟຊີວະພາບ. ການລົງທຶນຂອງ ພາກເອກະຊົນ ແລະ ພາກລັດ, ການສະໜັບສະໜູນ ທາງດ້ານນະໂຍບາຍ, ການຊົດເຊີຍ ແລະ ການສົ່ງເສີມນ້ຳມັນເຊື້ອໄຟຊີວະພາບ ແມ່ນກຳລັງເຕີບ ໂຕຂຶ້ນຢູ່ໃນປະເທດ ທີ່ພັດທະນາແລ້ວ ແລະ ປະເທດກຳລັງພັດທະນາ. ອົງການພະລັງງານສາກົນ (IEA) ໄດ້ປະເມີນໃນປີ 2006 ວ່າ ຜົນຜະລິດນ້ຳມັນເຊື້ອໄຟຊີວະພາບໃນໂລກ ຈະເພີ່ມຂຶ້ນ 7% ຕໍ່ປີ ເພື່ອໃຫ້ສະໜອງໄດ້ ຕາມຄວາມຕ້ອງການນ້ຳມັນ ໃນການຂົນສົ່ງທາງບົກທັງໝົດ 4% ໃນປີ 2030.

ນ້ຳມັນເຊື້ອໄຟຊີວະພາບ ສາມາດນຳໄປສູ່ຜົນໄດ້ຮັບທັງທາງບວກ ແລະ ທາງລົບ. ໃນຂະນະທີ່ມີ ໂອກາດຫຼຸດຜ່ອນການປ່ອຍແກ້ສໃນເຮືອນແກ້ວ, ການເພີ່ມການຮັບປະກັນທາງດ້ານພະລັງງານ ແລະ ການສ້າງໄຟຟ້າໃນຊົນນະບົດ, ສົ່ງເສີມການພັດທະນາຊົນນະບົດ ແລະ ລາຍຮັບທາງດ້ານ ເສດຖະກິດ, ແຕ່ກໍ່ມີຄວາມສ່ຽງ ແລະ ສິ່ງທ້າທາຍຢູ່ໃນຕົວມັນເອງໃນການພັດທະນາແບບຍືນຍົງ. ການປູກພືດໃຫ້ນ້ຳມັນເຊື້ອໄຟຊີວະພາບ ແມ່ນເປັນດາບສອງຄົມຕໍ່ກັບຊີວະນາໆພັນ, ອາຫານ ແລະ ຊັບພະຍາກອນນ້ຳ, ເຮັດໃຫ້ເກີດຄວາມຂັດແຍ້ງ ແລະ ການແຂ່ງຂັນໃນເລື່ອງທີ່ດິນ, ແລະ ເຮັດໃຫ້ເກີດມີຄວາມບໍ່ສະເໝີພາບໃນສັງຄົມ. ເຊັ່ນດຽວກັນກັບພື້ນຖານໂຄງລ່າງດ້ານພະລັງງານ ອື່ນໆ, ຂະແໜງນ້ຳມັນເຊື້ອໄຟຊີວະພາບຍັງຕ້ອງການເລື່ອງການທົດແທນ ແລະ ການສະໜັບ ສະໜູນ ແລະ ການປົກປ້ອງອື່ນໆຈາກລັດຖະບານໃນຮູບແບບຕ່າງໆ.

ບົດລາຍງານຫຍໍ້ກ່ຽວກັບນ້ຳມັນເຊື້ອໄຟຊີວະພາບນີ້ ເນັ້ນໃຫ້ເຫັນການລົງທຶນໃນການຜະລິດ ແລະ ການນຳໃຊ້ນ້ຳມັນເຊື້ອໄຟຊີວະພາບ ຢູ່ໃນສະພາບເງື່ອນໄຂຂອງ ລາວ, ແລະ ເປັນການໃຫ້ຂໍ້ມູນ ອັນສຳຄັນກັບຜູ້ຕັດສິນບັນຫາຢູ່ໃນ ສປປ ລາວ.

Box 1. ຄຳນິຍາມ

ວັດສະດຸຊີວະພາບ	ວັດສະດຸຈາກພືດ ຫຼື ສັດທີ່ມີຊີວິດຢູ່ໃນປະຈຸບັນ.
ພະລັງງານຊີວະພາບ	ພະລັງງານທີ່ຜະລິດຈາກວັດສະດຸຊີວະພາບ ບໍ່ວ່າຈະເປັນເພື່ອສ້າງພະລັງງານຄວາມຮ້ອນ, ໄຟຟ້າ, ແສງສະຫວ່າງ, ພະລັງງານກົນຈັກ ຫຼື ຂົນສົ່ງ.
ນ້ຳມັນເຊື້ອໄຟຊີວະພາບ	ນ້ຳມັນເຊື້ອໄຟທີ່ເປັນຂອງແຫຼວ ຫຼື ແກ້ສທີ່ຜະລິດມາຈາກວັດສະດຸຊີວະພາບ ທີ່ສາມາດໃຊ້ປ່ຽນແທນນ້ຳມັນແອັດຊັງ, ນ້ຳມັນກາຊ່ວນ ແລະ ນ້ຳມັນອື່ນໆ.
ເອທານອນຊີວະພາບ	ນ້ຳມັນທົດແທນທີ່ຜະລິດໄດ້ ມາຈາກພືດນ້ຳຕານ ຫຼື ພືດແປ້ງ ເຊັ່ນ: ອ້ອຍ, ມັນຕົ້ນ, ຫົວຜັກກາດຫວານ, ສາລີ ແລະ ເຂົ້າສາລີ.
ນ້ຳມັນກາຊ່ວນຊີວະພາບ	ນ້ຳມັນກາຊ່ວນທົດແທນປະກອບດ້ວຍເມັດທິລ (ຫຼື ເອັດທິລ) ເອັສເຕີຂອງກົດໄຂມັນທີ່ມີຕ່ອງໂສ້ຍາວ ທີ່ໄດ້ມາຈາກພືດນ້ຳມັນ ເຊັ່ນ: ໝາກເຍົາ, ໝາກນັດ, ແກ່ນເຣບຊີດ, ປາລ້ມ ແລະ ຖົ່ວເຫຼືອງ ຫຼື ໄຂມັນສັດ.
ລຸ່ນທຳອິດ	ນ້ຳມັນຊີວະພາບຜະລິດໄດ້ ມາຈາກອາຫານ ແລະ ພືດວັດຖຸດິບທີ່ມີຢູ່ ໂດຍການນຳໃຊ້ເຕັກໂນໂລຍີແປຮູບ ທີ່ສ້າງຕັ້ງຂຶ້ນແບບງ່າຍ ແລະ ໃຊ້ໄດ້ດີ (ເກືອບທຸກອັນ ທີ່ໃຊ້ນ້ຳມັນເຊື້ອໄຟຊີວະພາບໃນປະຈຸບັນ ແມ່ນລຸ່ນທຳອິດ).
ລຸ່ນທີສອງ	ນ້ຳມັນຊີວະພາບທີ່ຜະລິດ ໄດ້ມາຈາກວັດສະດຸຊີວະພາບ ທີ່ບໍ່ສາມາດກິນໄດ້ຫຼາຍອັນ, ລວມມີທັງຂອງເສດເຫຼືອຈາກການກະສິກຳ ແລະ ພືດຕ່າງໆ ເຊັ່ນ: ຫຍ້າສະວິດກຣາດ ແລະ ພືດພວກຂີງໄຄປ່າ, ແລະ ມີຄວາມຕ້ອງການຂະບວນການປຸງແຕ່ງ ທີ່ກ້າວໜ້າທາງດ້ານເຄມີທີ່ໃຊ້ຄວາມຮ້ອນ ແລະ ເຄມີຊີວະພາບຢູ່ສະເໝີ.
ແກ້ສຊີວະພາບ	ແກ້ສທີ່ຜະລິດໄດ້ມາຈາກການຍ່ອຍສະຫຼາຍ ແລະ ການໝັກວັດສະດຸຊີວະພາບທີ່ບໍ່ໃຊ້ອົກຊີ ແລະ ສ່ວນໃຫຍ່ປະກອບໄປດ້ວຍແກ້ສມີເທນ ແລະ ຄາ ບອນໄດອອກໄຊດ້ ແລະ ໃຊ້ເປັນພະລັງງານໄຟຟ້າ, ຄວາມຮ້ອນ, ຫຼື ໃຊ້ຢູ່ໃນພາຫະນະທີ່ແລ່ນດ້ວຍແກ້ສທຳມະຊາດອັດແໜ້ນ (CNG) ຫຼື ແກ້ສປີໂຕຣລຽມແຫຼວ (LPG).

(ແຫຼ່ງຂໍ້ມູນ: ສະຖາບັນພະລັງງານທົດແທນຂອງລາວ (LIRE); ແລະ IUCN. 2008. ການຈັດຕັ້ງປະຕິບັດການຜະລິດພະລັງງານຊີວະພາບແບບຍືນຍົງ: ການເກັບກຳເຄື່ອງມື ແລະວິທີທາງ. Gland, Switzerland.)

1. ການນຳໃຊ້ພະລັງງານ ແລະ ນ້ຳມັນຊີວະພາບຢູ່ໃນ ສປປ ລາວ.

ການນຳໃຊ້ພະລັງງານຢູ່ໃນ ສປປ ລາວ ແມ່ນຍັງເປັນການນຳໃຊ້ວັດສະດຸຊີວະພາບແບບດັ້ງເດີມເປັນຕົ້ນຕໍ (ເປັນຕົ້ນແມ່ນຟືນ) ເພື່ອໃຊ້ໃນການແຕ່ງຢູ່ຄົວກິນ ແລະ ໃຫ້ພະລັງງານຄວາມຮ້ອນ; ຢູ່ໃນຊົນນະບົດແມ່ນຍັງກວມເຖິງ 69% ຂອງການນຳໃຊ້ຕໍ່ຫົວຄົນ (ການນຳໃຊ້ພະລັງງານຈາກແຫຼ່ງຕ່າງໆໃນທົ່ວປະເທດແມ່ນໄດ້ສະແດງໄວ້ໃນຮູບທີ 1).

ຮູບທີ. 1: ການນຳໃຊ້ພະລັງງານຈາກແຫຼ່ງຕ່າງໆ, ສປປ ລາວ[1]



ເນື່ອງຈາກວ່າເປັນປະເທດທີ່ບໍ່ມີທາງອອກສູ່ທະເລ ພ້ອມກັບບໍ່ມີການຜະລິດ ນ້ຳມັນປີໂຕຣລຽມໃນພື້ນທີ່, ເສດຖະກິດລາວຈຶ່ງມີຄວາມອ່ອນໄຫວໄປຕາມ ຄວາມບໍ່ແນ່ນອນທາງດ້ານລາຄາຂອງເຊື້ອເພີງ. ຢູ່ໃນທົ່ວປະເທດ ການນຳ ໃຊ້ເຊື້ອເພີງສ່ວນໃຫຍ່ແມ່ນເພື່ອການຂົນສົ່ງ; ຢູ່ໃນເຂດຊົນນະບົດນັ້ນ ສ່ວນ ຫຼວງຫຼາຍແມ່ນນຳໃຊ້ນ້ຳມັນກາຊ່ວນ ເຂົ້າໃນການໃຕ້ເພື່ອແສງສະຫວ່າງ, ປັ່ນໄຟຟ້າ ແລະ ເຂົ້າໃນການຜະລິດ). ການຊົມໃຊ້ນ້ຳມັນຢູ່ໃນ ສປປ ລາວ ແມ່ນເພີ່ມຂຶ້ນຢ່າງໄວວາ. ໃນປີ 2008, ສປປ ລາວ ນຳເຂົ້ານ້ຳມັນເຊື້ອ

ຮູບທີ. 2: ການນຳໃຊ້ນ້ຳມັນເຊື້ອໄຟ ແລະ ການຄາດຄະເນຕໍ່ໜ້າ, ສປປ ລາວ (ລ້ານລິດ)[1]



ເພີງຈຳນວນ 558 ລ້ານລິດ, ທຽບກັບນຳເຂົ້າໃນປີ 2006 ຈຳນວນ 450 ລ້ານລິດ. ກະຊວງພະລັງງານ ແລະ ບໍ່ແຮ່ຂອງລາວ ປະເມີນໄວ້ວ່າການຊົມ ໃຊ້ນ້ຳມັນໃນປີ 2010 ຈະເປັນຈຳນວນ 561 ລ້ານລິດ ແລະ ເປັນຈຳນວນ 716 ລ້ານລິດ ໃນປີ 2015[2]. ລັດວິສາຫະກິດນ້ຳມັນເຊື້ອໄຟລາວ (LSF) ໄດ້ປະເມີນຕົວເລກໄວ້ສູງກວ່ານີ້ (ເບິ່ງໃນຮູບທີ 2).

ລັດຖະບານແຫ່ງ ສປປ ລາວ ເປັນຜູ້ມີບົດບາດສຳຄັນຢູ່ໃນການສົ່ງເສີມ ນ້ຳມັນຊີວະພາບ ຢູ່ໃນປະເທດ. ພ້ອມດຽວກັບ ການຮັບຮອງບົດບາດຂອງ ນ້ຳມັນເຊື້ອໄຟຊີວະພາບຢູ່ໃນແຜນພັດທະນານັ້ນ, ຮ່າງນະໂຍບາຍການປະ ຫຍັດພະລັງງານ ແລະ ນ້ຳມັນເຊື້ອໄຟຊີວະພາບ ຂອງກະຊວງພະລັງງານ ແລະ ບໍ່ແຮ່ (MEM) ສະບັບປີ 2006 ລວມມີເປົ້າໝາຍສຳລັບການຊົມໃຊ້ ພາຍໃນປະເທດ, ແລະ ຕັ້ງແຕ່ນັ້ນມາ ທາງສຳນັກງານນາຍົກ ແລະ ອົງ ການວິທະຍາສາດ ແລະ ເຕັກໂນໂລຍີແຫ່ງຊາດ (NAST) ໄດ້ມີສ່ວນຮ່ວມ ຢ່າງຕັ້ງໜ້າໃນການສະໜັບສະໜູນ ການລິເລີ່ມທາງດ້ານນ້ຳມັນຊີວະພາບ,

[1] LIRE. 2010. *ການພັດທະນານ້ຳມັນຊີວະພາບຢູ່ໃນ ສປປ ລາວ: ການປະເມີນເບື້ອງຕົ້ນ ແລະການຕີລາຄາດ້ານນະໂຍບາຍ*

[2] LIRE, 2009(a). *ການສຶກສາການປະເມີນນ້ຳມັນຊີວະພາບຢູ່ໃນ ສປປ ລາວ: ນະ ໂຍບາຍ ແລະຄຳເຫັນແນະນຳຍຸດທະສາດທາງດ້ານນ້ຳມັນຊີວະພາບສຳລັບ ສປປ ລາວ* [ຮ່າງສະບັບສຸດທ້າຍ]. ນະຄອນຫຼວງວຽງຈັນ, ສປປ ລາວ.

ເຊິ່ງສ່ວນໃຫຍ່ແມ່ນໄດ້ເນັ້ນໃສ່ໝາກເຍົາ ທີ່ເປັນພືດນ້ຳມັນ. ການລິເລີ່ມເຮັດການຄົ້ນຄວ້າໃຫຍ່ທີ່ສຸດ ແມ່ນເຮັດຢູ່ໃນສວນປູກໝາກເຍົາທົດລອງໃນເນື້ອທີ່ 20 ເຮັກຕາ ທີ່ໄດ້ຮ່ວມກັນທົດລອງໂດຍທາງ NAST ແລະ ບໍລິສັດເອກະຊົນ. ລັດຖະບານລາວໄດ້ຕັ້ງເປົ້າໝາຍ ທີ່ຈະເອົານ້ຳມັນເຊື້ອເພີງຊີວະພາບທົດແທນນ້ຳມັນເຊື້ອເພີງປິໂຕຣລຽມໃນລະດັບ 10% ພາຍໃນປີ 2025.

ດັ່ງນັ້ນ, ສປປ ລາວ ໄດ້ມີຂະແໜງນ້ຳມັນເຊື້ອໄຟຊີວະພາບປະກົດຂຶ້ນມາ ໂດຍການເນັ້ນໜັກໃສ່ ການຜະລິດພືດວັດຖຸດິບເພື່ອສົ່ງອອກ (ເຊັ່ນ: ມັນຕົ້ນ ແລະ ອ້ອຍ) ແລະ ການລິເລີ່ມກັບໝາກເຍົາຫີນ ຈຳນວນຫຼາຍໂຄງການທີ່ໄດ້ຮັບທຶນຜ່ານທາງການລົງທຶນ ຂອງພາກເອກະຊົນ, ລັດຖະບານ ແລະ ຄູ່ຮ່ວມງານພັດທະນາ. ເຖິງແນວໃດກໍ່ຕາມ, ປະສົບການດ້ານການຜະລິດນ້ຳມັນເຊື້ອເພີງຊີວະພາບຢູ່ໃນ ສປປ ລາວ ແມ່ນຍັງອ່ອນນ້ອຍຫຼາຍ. ອີງຕາມກອງປະຊຸມປຶກສາຫາລືກັບພາກສ່ວນກ່ຽວຂ້ອງ ທີ່ທາງສະຖາບັນພະລັງງານທົດແທນຂອງລາວ (LIRE) ໄດ້ຈັດຂຶ້ນໃນປີ 2009, ເຫັນວ່າມີເນື້ອທີການປູກໝາກເຍົາໃນເວລານັ້ນປະມານ 30,000 ເຮັກຕາ ໂດຍຜ່ານການລົງທຶນຂອງພາກເອກະຊົນ, ເຊິ່ງຈົນຮອດປີ 2009[3], ສາມາດເກັບກ່ຽວໝາກເຍົາຫີນໄດ້ພຽງແຕ່ 1,478 ໂຕນເທົ່ານັ້ນ, ສ່ວນໃຫຍ່ມີຈຸດໝາຍປາຍທາງໄປທີ່ຕະຫຼາດສົ່ງອອກ. ປະຈຸບັນກຳລັງມີການນຳໃຊ້ພື້ນທີ່ດິນຂະໜາດໃຫຍ່ ເພື່ອໃຊ້ປູກພືດ ເຊັ່ນ: ສາລີ, ມັນຕົ້ນ ແລະ ອ້ອຍ, ແຕ່ພືດເຫຼົ່ານີ້ແມ່ນໃຊ້ເປັນອາຫານ/ອາຫານສັດ ຫຼື ສົ່ງອອກ, ເຊິ່ງຜ່ານມາແມ່ນຍັງບໍ່ທັນໄດ້ນຳໃຊ້ເຂົ້າໄປ ຜະລິດນ້ຳມັນເຊື້ອໄຟຊີວະພາບໃນປະເທດເລີຍ.

2. ການລົງທຶນໃນທຸລະກິດນ້ຳມັນເຊື້ອໄຟຊີວະພາບ: ປະເດັນຕົ້ນຕໍ ຄວາມເປັນໄປໄດ້ທາງດ້ານເສດຖະກິດ.

ນັບຕັ້ງແຕ່ປີ 2009 ເປັນຕົ້ນມາ, ການສະໜອງນ້ຳມັນເຊື້ອໄຟຊີວະພາບ ໃນປະຈຸບັນແມ່ນມີໜ້ອຍກວ່າ 1% ຂອງນ້ຳມັນເຊື້ອໄຟທີ່ໃຊ້ ໃນການຂົນສົ່ງທົ່ວໂລກ ແລະ ປະມານ 3% ໃນບັນດາປະເທດກຳລັງພັດທະນາໃນອາຊີ[4]. ປະຈຸບັນນີ້ ນ້ຳມັນເຊື້ອໄຟຊີວະພາບບໍ່ຄ່ອຍຈະມີຄວາມເປັນໄປໄດ້ ທາງດ້ານເສດຖະກິດຢູ່ໃນປະເທດໃດໜຶ່ງ ໂດຍທີ່ບໍ່ມີການສະໜັບສະໜູນຂອງພາກລັດ. ແມ້ແຕ່ຢູ່ໃນປະເທດເບຣຊິນ ແລະ ສະຫະລັດ, ບ່ອນທີ່ມີການຜະລິດນ້ຳມັນເຊື້ອໄຟຊີວະພາບ ຈາກພືດເປັນວັດຖຸດິບໄດ້ຢ່າງມີປະສິດທິພາບ ແລະ ມີຕະຫຼາດຢູ່ ກໍ່ຍັງຈຳເປັນຕ້ອງໄດ້ມີການສະໜັບສະໜູນຈາກພາກລັດ. ການຄົ້ນຄວ້າຊີ້ໃຫ້ເຫັນວ່າ ບໍ່ມີວິທີທາງອັນໃດຈະຊ່ວຍໃຫ້ນ້ຳມັນເຊື້ອໄຟຊີວະພາບຢູ່ໃນພາວະຄວາມສ່ຽງຕ່ຳ ແລະ ເປັນການລົງທຶນທີ່ສາມາດໃຫ້ກຳໄລໄດ້ ໂດຍທີ່ບໍ່ມີການສະໜັບສະໜູນ ຂອງລັດຖະ ບານອີກບາງດ້ານ[5]. ອຸດສາຫະກຳ ແລະ ຕະຫຼາດນ້ຳມັນເຊື້ອໄຟຊີວະພາບ ອາດຈຳເປັນຕ້ອງໄດ້ມີການປົກປ້ອງ ແລະ ຕະຫຼາດສົ່ງອອກແມ່ນຍັງມີຈຳກັດ. ຕະຫຼາດສະຫະລັດ ແລະ ຕະຫຼາດຢູโรບແມ່ນຖືກກີດກັນຢ່າງໜັກ, ໃນຂະນະທີ່ຕະຫຼາດອາຊີ ທີ່ຍິ່ງກ່ຽວຂ້ອງກັບ ສປປ ລາວ ນັ້ນແມ່ນມີການແຂ່ງ ຂັນທີ່ສູງ.

ຢູ່ໃນປະເທດອິນໂດເນເຊຍ ໄດ້ມີລາຍງານວ່າລັດຖະບານ ໄດ້ໃຫ້ຄຳໝັ້ນສັນຍາເງິນໄວ້ຈຳນວນ 1.1 ຕື້ໂດລາ ເພື່ອເປັນການຊ່ວຍທາງດ້ານພື້ນຖານໂຄງລ່າງ ຂອງການຜະລິດນ້ຳມັນເຊື້ອໄຟຊີວະພາບ ນອກຈາກທີ່ໃຫ້ໄປກັບການຄົ້ນຄວ້າ ແລະ ການພັດທະນາ, ແລະ ການສະໜັບສະໜູນນ້ຳມັນເຊື້ອເພີງທົ່ວໄປ. ບໍລິສັດເປີຕາມິນາ (Pertamina) ທີ່ເປັນບໍລິສັດນ້ຳມັນເຊື້ອໄຟຂອງລັດຂາດທຶນໄປຈຳນວນທັງໝົດ 40 ລ້ານໂດລາ ໃນລະຫວ່າງປີ 2006-2008 (ເບິ່ງລາຍລະອຽດໃນ Box 2). ຢູ່ໃນ ສປປ ລາວ, ນ້ຳມັນເຊື້ອໄຟຊີວະພາບມີທ່າແຮງທີ່ ຈະເຮັດໃຫ້ມີຜົນປະ�โยດທາງດ້ານການເງິນ ເຊັ່ນ: ການຫຼຸດຜ່ອນການນຳເຂົ້ານ້ຳມັນເຊື້ອໄຟ ແລະ ການຫຼຸດຜ່ອນການທົດແທນນ້ຳມັນກາຊ່ວນໄປພ້ອມກັນ (ປະຈຸບັນນີ້ແມ່ນປະມານ 48 ຕື້ກີບ/ປີ), ເຊິ່ງສາມາດໃຊ້ລົງທຶນໃໝ່ຢູ່ໃນຂະແໜງນ້ຳມັນເຊື້ອໄຟຊີວະພາບ[6]. ເພາະວ່າປະຈຸບັນນີ້ ສປປ ລາວ ໃຊ້ຈ່າຍເພື່ອການນຳເຂົ້ານ້ຳມັນເຊື້ອໄຟ ເປັນຈຳນວນຫຼວງຫຼາຍ, ແມ້ແຕ່ມີການຫຼຸດຜ່ອນ ຈຳນວນຄ່າໃຊ້ຈ່າຍການນຳເຂົ້າເຫຼົ່ານີ້ລົງເລັກນ້ອຍ ກໍ່ແມ່ນຈະເຮັດໃຫ້ມີເງິນໄປໃຊ້ໃນຂະແໜງເສດຖະກິດອື່ນ. ເຖິງແນວໃດກໍ່ຕາມ, ການຈະພັດທະນາຂະແໜງນ້ຳມັນເຊື້ອໄຟຊີວະພາບ ໃຫ້ປະສົບຜົນສຳເລັດ (ທີ່ຍັງເປັນການປະກອບສວນຕໍ່ການພັດທະນາຊົນນະບົດ) ນັ້ນແມ່ນຈະຕ້ອງມີການຊ່ວຍເຫຼືອ ອັນຈິງຈັງຂອງທາງລັດຖະບານ.

<u>ການນຳໃຊ້ຢູ່ພາຍໃນປະເທດກັບການສົ່ງອອກ.</u> ທິດທາງສອງອັນໃນການພັດທະນານ້ຳມັນເຊື້ອໄຟຊີວະພາບ ແມ່ນຈະມີໂອກາດ ແລະ ຄວາມສ່ຽງທີ່ແຕກຕ່າງກັນ. ດັ່ງທີ່ໄດ້ກ່າວມາແລ້ວນັ້ນ, ຄວາມສຳຄັນທາງດ້ານເສດຖະກິດແມ່ນເປັນບັນຫາໜຶ່ງ ແລະ ເສດຖະກິດທາງດ້ານການຜະລິດນ້ຳມັນເຊື້ອໄຟຊີວະພາບຢູ່ໃນ ສປປ ລາວ ແມ່ນຍັງບໍ່ໄດ້ຄິດໄລ່ໃນລາຍລະອຽດເທື່ອ. ໂດຍອີງຕາມການປະເມີນຂອງທາງ LIRE[1], ລາຄານ້ຳມັນອີທານອລຊີວະພາບຢູ່ພາຍໃນປະເທດຕໍ່ລິດທີ່ຜະລິດມາຈາກມັນຕົ້ນ ຫຼື ອ້ອຍ, ຫຼື ນ້ຳມັນກາຊ່ວນຊີວະພາບທີ່ຜະລິດມາຈາກໝາກເຍົາ ແມ່ນຈະແຂ່ງຂັນໄດ້ກັບນ້ຳມັນເຊື້ອໄຟປິໂຕຣລຽມ. ເຖິງແນວໃດກໍ່ຕາມ, ການລົງທຶນເບື້ອງຕົ້ນເຂົ້າໃນການກໍ່ສ້າງພື້ນຖານໂຄງລ່າງ ແລະ ສິ່ງອຳນວຍຄວາມສະດວກຕ່າງໆ ອາດຈະພິສູດໃຫ້ເຫັນວ່າ ເປັນອຸປະສັກທີ່ບໍ່ອາດຈະສາມາດຂ້າມຜ່ານໄດ້. ດັ່ງນັ້ນ, ການສະໜັບສະໜູນທາງດ້ານການເງິນ ອາດຈະມີຄວາມຈຳເປັນເພື່ອຮັບປະກັນໃຫ້ນ້ຳມັນປະສົມນັ້ນແຂ່ງຂັນໄດ້, ແລະ ອາດຈະມີການຮຽກຮ້ອງໃຫ້ມີແຮງຈູງໃຈເພື່ອສະໜັບສະໜູນ ສິ່ງອຳນວຍຄວາມສະດວກໃນການຜະລິດ, ການປ້ອງກັນການນຳເຂົ້າ ນ້ຳມັນເຊື້ອໄຟຊີວະພາບຈາກປະເທດອື່ນ, ແລະ ການນຳເອົາເຕັກໂນโลยีໃໝ່ເຂົ້າມາ ຫຼື ການຍົກລະດັບເຕັກໂນโลยีເກົ່າ.

ການສົ່ງອອກພືດວັດຖຸດິບ ທີ່ໃຊ້ເຮັດນ້ຳມັນເຊື້ອໄຟຊີວະພາບ ແມ່ນເປັນເລື່ອງງ່າຍກວ່າ ແລະ ການຜະລິດພືດອຸດສາຫະກຳ ແມ່ນເປັນທີ່ຄຸ້ນເຄີຍກັນດີແລ້ວຢູ່ໃນ ສປປ ລາວ. ເຖິງແນວໃດກໍ່ຕາມ, ອັນນີ້ຈະເຮັດໃຫ້ເສດຖະກິດຂອງລາວ ພາດໂອກາດໃນການສ້າງມູນຄ່າເພີ່ມ, ເຊັ່ນດຽວກັບການຮັບປະກັນທາງດ້ານພະລັງງານທີ່ມີທ່າແຮງ ແລະ ຜົນປະ�โยດທາງດ້ານສິ່ງແວດລ້ອມຂອງນ້ຳມັນເຊື້ອໄຟຊີວະພາບ. ເຖິງແມ່ນວ່າ ຄວາມເປັນໄປໄດ້ຂອງການຜະລິດນ້ຳມັນເຊື້ອໄຟຊີວະພາບ ຂະໜາດນ້ອຍ ແລະ ການສ້າງພະລັງງານຍັງບໍ່ທັນໄດ້ຮັບການທົດສອບຢູ່ໃນ ສປປ ລາວ, ທາງ LIRE ປະເມີນໄວ້ວ່າ ນ້ຳມັນເຊື້ອໄຟຊີວະພາບ ທີ່ຜະລິດໄດ້ຈາກການປູກໝາກເຍົາ 1 ເຮັກຕາ ແມ່ນເທົ່າກັບຄວາມຕ້ອງການນ້ຳມັນກາຊ່ວນຂອງ 10 ຄົວເຮືອນ ໂດຍປະມານ, ດັ່ງນັ້ນ, ຈຶ່ງເປັນການໃຫ້ຄວາມຫວັງກັບໂຄງການພະລັງງານຊົນນະບົດ[7].

<u>ການສ້າງສວນປູກພືດຂະໜາດໃຫຍ່ກັບການຜະລິດຂະໜາດນ້ອຍ.</u> ໂດຍປຽບທຽບກັບພືດອຸດສາຫະກຳ ແລະ ກະສິກຳແລ້ວ, ພືດວັດຖຸດິບທີ່ໃຊ້ເຮັດນ້ຳມັນເຊື້ອໄຟຊີວະພາບ (ເຊັ່ນ: ມັນຕົ້ນ, ໝາກເຍົາ, ສາລີ ແລະ ອ້ອຍ) ແມ່ນມີຫຼາຍທາງເລືອກ ແລະ ສິ່ງທ້າທາຍ. ເງື່ອນໄຂ ແລະ ຮູບແບບການ

[3] LIRE, 2009(a).

[4] USAID. 2009. *ນ້ຳມັນເຊື້ອໄຟຊີວະພາບໃນອາຊີ: ການວິເຄາະທາງເລືອກເພື່ອຄວາມຍືນຍົງ.*

[5] Kojima et al. 2007, in LIRE 2009(a).

[6] LIRE, 2009(b). *ການສຶກສາການປະເມີນນ້ຳມັນຊີວະພາບຢູ່ໃນ ສປປ ລາວ: ຄວາມຮຽກຮ້ອງຕ້ອງການທີ່ສະແດງອອກ ແລະຄຳເຫັນແນະນຳເພື່ອທົດແທນນ້ຳມັນເຊື້ອເພີງດ້ວຍນ້ຳມັນເຊື້ອໄຟຊີວະພາບໃຫ້ໄດ້ 10% ໃນປີ 2020* [ຮ່າງສະບັບສຸດທ້າຍ]. ນະຄອນຫຼວງວຽງຈັນ, ສປປ ລາວ.

[7] LIRE, 2009a.

ປູກທີ່ເພີ່ມຂຶ້ນ ແມ່ນເປັນສິ່ງບົ່ງບອກທີ່ສຳຄັນ ເຖິງຄວາມຍືນຍົງໂດຍລວມ. ບັນຫາທີ່ຢູ່ອ້ອມຮອບ ກັບການເຮັດສວນປູກຂະໜາດໃຫຍ່ຢູ່ໃນ ສປປ ລາວ ແມ່ນຢູ່ຄົງທີ່ສຳລັບການຜະລິດພືດ ໃຊ້ເຮັດນ້ຳມັນເຊື້ອໄຟຊີວະພາບ. ສິ່ງເຫຼົ່ານີ້ລວມມີ: ການຍາດແຍ່ງການນຳໃຊ້ຊັບພະຍາກອນທີ່ດິນ; ການເຮັດໃຫ້ເກີດການທຳລາຍປ່າໄມ້ ແລະ ການສູນເສຍຊີວະນາໆພັນ; ການຍົກຍ້າຍຊາວບ້ານອອກໄປຈາກພື້ນທີ່; ການມີແຮງງານໃຫ້ພຽງພໍ; ການຄ້ຳປະກັນດ້ານສະບຽງອາຫານຫຼຸດລົງ; ການຈັດຕັ້ງປະຕິບັດກົດໝາຍ ແລະ ກົດລະບຽບທີ່ບໍ່ເຂັ້ມງວດທີ່ໄດ້ອອກແບບ ເພື່ອຫຼຸດຜ່ອນສະຖານະການເຫຼົ່ານີ້. ການເຮັດສັນຍາການຜະລິດແບບຜູກພັນສອງສົ້ນ ໃນການຜະລິດຂະໜາດນ້ອຍແມ່ນມີທ່າແຮງທີ່ປະກອບສ່ວນຕ່ຳກັບການເຕີບໂຕ ແລະ ການພັດທະນາເສດຖະກິດຊົນນະບົດຫຼາຍຂຶ້ນ ໂດຍທີ່ມີຜົນກະທົບທາງລົບຕ່ຳກັບສິ່ງແວດລ້ອມ ແລະ ສັງຄົມໜ້ອຍກວ່າ. ເຖິງແນວໃດກໍ່ຕາມ, ລະບົບການເຮັດສັນຍາຜູກພັນສອງສົ້ນກໍ່ເຮັດໃຫ້ເກີດມີສິ່ງທ້າທາຍຢູ່ໃນຕົວມັນເອງ ເຊັ່ນ: ຄວາມຕ້ອງການເພື່ອການສະໜັບສະໜູນ ແລະ ການສົ່ງເສີມຊາວກະສິກອນ, ການປົກປ້ອງຊາວກະສິກອນຜູ້ທຸກຍາກ ແລະ ດ້ອຍໂອກາດ, ການຄ້ຳປະກັນສະບຽງອາຫານ ແລະ ການດຶງດູດການລົງທຶນ.

ໝາກເຍົາ ອາດຈະເປັນພືດທີ່ໃຊ້ຜະລິດນ້ຳມັນເຊື້ອໄຟຊີວະພາບອັນສຳຄັນຂອງ ສປປ ລາວ ເພາະວ່າມັນສາມາດປູກໄດ້ ຢູ່ໃນດິນທີ່ເສື່ອມໂຊມ, ນັ້ນກໍ່ໝາຍຄວາມວ່າມີຄວາມແຂ່ງຂັນໜ້ອຍກວ່າ ການປູກພືດອື່ນ ແລະ ເຂົ້າ. ອີງຕາມການປະເມີນຂອງ LIRE, ການທົດແທນການນຳໃຊ້ນ້ຳມັນກາຊ່ວນ ຈຳນວນ 10% ໃນປີ 2020 ແມ່ນຈະເທົ່າກັບຈຳນວນນ້ຳມັນເຊື້ອໄຟຊີວະພາບ 64 ລ້ານລິດ, ເຊິ່ງເທົ່າກັບເນື້ອທີ່ປູກໝາກເຍົາປະມານ 135,000 ເຮັກຕາ, ຫຼື 4% ຂອງເນື້ອທີ່ດິນກະສິກຳ. ມີຄວາມຕ້ອງການທີ່ດິນຂະໜາດໃຫຍ່ກໍ່ເພາະມີຄວາມຕ້ອງການເຊື້ອເພີງ ຕາມທີ່ໄດ້ປະເມີນໄວ້ ແລະ ກໍ່ຍ້ອນຜົນຜະລິດໝາກເຍົາທີ່ຂ້ອນຂ້າງຕ່ຳ. ນອກຈາກນັ້ນ, ອັນນີ້ອາດຈະເປັນການປະເມີນຈຳນວນຂອງໝາກເຍົາທີ່ຕ້ອງການນັ້ນຕ່ຳ ໂດຍທີ່ບໍ່ມີການສະໜັບສະໜູນຢ່າງຈິງຈັງຂອງລັດຖະບານ ແລ້ວ ແກ່ນໝາກເຍົາທີ່ຜະລິດໄດ້ສ່ວນໃຫຍ່ແມ່ນຈະຖືກສົ່ງອອກ. ເມື່ອນຳເອົາເລື່ອງນີ້ເຂົ້າມາພິຈາລະນາແລ້ວ, *ຍຸດທະສາດປ່າໄມ້ແຫ່ງຊາດຮອດປີ 2020* ຄາດການໄວ້ວ່າຈະມີເນື້ອທີ່ປູກໄມ້ອຸດສາຫະກຳຈຳນວນ 500,000 ເຮັກຕາ ໃນປີ 2020[8]; ເປັນຕົວເລກທີ່ສາມາດປຽບທຽບໄດ້ກັບທີ່ດິນທັງໝົດຕ້ອງການ ເພື່ອໃຫ້ບັນລຸໄດ້ຕາມເປົ້າໝາຍນ້ຳມັນເຊື້ອໄຟຊີວະພາບ 10%. ເພື່ອໃຫ້ບັນລຸໄດ້ຕາມເປົ້າໝາຍໂດຍປະມານແລ້ວ, ຈະຕ້ອງມີການຄຳນຶງຢ່າງຈິງຈັງ ໃນເລື່ອງຂອງທີ່ດິນ ແລະ ແຮງງານທີ່ມີຢູ່, ການຫຼຸດຜ່ອນການສົ່ງອອກ ແລະ ການກຳນົດວ່າພື້ນທີ່ການປູກໝາກເຍົານັ້ນຈະສາມາດໃຫ້ຊາວກະສິກອນ ຜູ້ຜະລິດຂະໜາດນ້ອຍເຮັດໃຫ້ ຫຼື ບໍ່[9].

<u>ຜົນກະທົບທາງດ້ານສິ່ງແວດລ້ອມ.</u> ການປູກພືດນ້ຳມັນເຊື້ອໄຟຊີວະພາບ ແລະ ການຜະລິດນ້ຳມັນເຊື້ອໄຟຊີວະພາບ ແມ່ນຈະມີຜົນກະທົບຕໍ່ສິ່ງແວດລ້ອມທັງທາງບວກ ແລະ ທາງລົບ. ຜົນກະທົບທາງບວກຕໍ່ກັບສິ່ງແວດລ້ອມຈະລວມມີ ການຫຼຸດຜ່ອນການປ່ອຍແກ້ສເຮືອນແກ້ວ (GHG) ຈາກນ້ຳມັນເຊື້ອເພີງ, ການຟື້ນຟູທີ່ດິນບໍ່ໄດ້ໃຊ້ປະໂຫຍດໃຫ້ກັບມາໄດ້ໃຊ້ປະໂຫຍດ, ແລະ ເປັນການເພີ່ມການຄວບຄຸມເລື່ອງການເຊາະເຈື່ອນ. ປະຈຸບັນນີ້ການຜະລິດນ້ຳມັນຊີວະພາບຢູ່ໃນ ສປປ ລາວ ແມ່ນຍັງມີໜ້ອຍສຸດ ແລະ ມີຜົນກະທົບຕໍ່ກັບສິ່ງແວດລ້ອມໜ້ອຍສຸດ. ເຖິງແນວໃດກໍ່ຕາມ, ການຜະລິດນ້ຳມັນເຊື້ອໄຟຊີວະພາບທົ່ວໂລກ ຮອດປະຈຸບັນນີ້ໄດ້ສະແດງໃຫ້ເຫັນວ່າ ມັນສາມາດເຮັດໃຫ້ເກີດບັນຫາກັບສະພາບແວດລ້ອມໄດ້ ແມ້ວ່າອາດຈະມີທ່າແຮງ

[8]ສຳນັກງານນາຍົກ. 2005. *ຍຸດທະສາດປ່າໄມ້ຮອດປີ 2020.*

[9] LIRE, 2009(a).

ໃນການຫຼຸດຜ່ອນການປ່ອຍແກ້ສເຮືອນແກ້ວ (GHG) ກໍ່ຕາມ. ການປູກພືດນ້ຳມັນເຊື້ອໄຟຊີວະພາບໃນພື້ນທີ່ຂະໜາດໃຫຍ່, ເຊັ່ນດຽວກັບການປູກພືດອຸດສາຫະກຳອື່ນໆ ແມ່ນສາມາດສົ່ງຜົນໃຫ້ເກີດການທຳລາຍປ່າໄມ້ ແລະ ການສູນເສຍຊີວະນາໆພັນໃນຕໍ່ໜ້າ ດັ່ງທີ່ໄດ້ເກີດຂຶ້ນມາແລ້ວຢູ່ໃນສວນປູກ

ປາລ້ມນ້ຳມັນຂອງປະເທດອິນໂດເນເຊຍ ແລະ ມາເລເຊຍ. ນອກຈາກນັ້ນຍັງມີກົດລະນີຂອງໂຄງການປູກໄມ້ ຕາມທີ່ໄດ້ວາງແຜນໄວ້ແລ້ວນັ້ນບໍ່ເຄີຍຖືກຈັດຕັ້ງປະຕິບັດເລີຍ, ເຊິ່ງປ່າໄມ້ແມ່ນໄດ້ຖືກຕັດໄປຮຽບຮ້ອຍແລ້ວ ແຕ່ບໍ່ເຫັນມີການປູກເກີດຂຶ້ນມາເລີຍ. ຢູ່ໃນ ສປປ ລາວ ໄດ້ມີການຕັດໄມ້ອອກຈາກພື້ນທີ່ 3000 ເຮັກຕາຢູ່ໃນແຂວງບໍລິຄຳໄຊ ໃນປີ 2004-2006 ເພື່ອຈະເຮັດສວນປູກໝາກພ້າວ, ແຕ່ແລ້ວບໍ່ມີສວນປູກໝາກພ້າວເກີດຂຶ້ນເລີຍ[10]. ນ້ຳມັນເຊື້ອໄຟຊີວະພາບທີ່ຜະລິດມາຈາກພືດທີ່ເມື່ອກ່ອນປູກຢູ່ໃນດິນປ່າໄມ້, ດິນທີ່ລຸ່ມ ຫຼື ດິນຕົມທີ່ທັບຖົມ ນັ້ນແມ່ນຈະໃຊ້ເວລາດົນນານ ເພື່ອທົດແທນຄືນກັ່ນຕອງທາດຄາບອນ (ນັ້ນຄື ມັນອາດຈະໃຊ້ເວລາຫຼາຍພັນປີ ສຳລັບການຫຼຸດຜ່ອນ

Box 2. ປະສົບການຂອງອິນໂດເນເຊຍກັບການສົ່ງເສີມນ້ຳມັນເຊື້ອໄຟຊີວະພາບ

ໃນປີ 2006, ລັດຖະບານອິນໂດເນເຊຍ ໄດ້ກຳນົດນະໂຍບາຍແຫ່ງຊາດ ກ່ຽວກັບນ້ຳມັນເຊື້ອໄຟຊີວະພາບຂອງຕົນເອງ. ແຜນການໄດ້ເລັງເຫັນວ່າ ນ້ຳມັນເຊື້ອໄຟຊີວະພາບຈະສະໜອງໄດ້ໃນຈຳນວນ 10 % ຂອງນ້ຳມັນເຊື້ອໄຟທີ່ໃຊ້ໃນການຂົນສົ່ງຮອດປີ 2010, ສ້າງວຽກເຮັດງານທຳ ແລະ ນຳໄປສູ່ການກຸ້ມຕົນເອງ ທາງດ້ານພະລັງງານຂອງຄົນຊົນນະບົດ. ໃນປີ 2007, ລັດຖະບານອິນໂດເນເຊຍ ໄດ້ເຊັນສັນຍາ 67 ສະບັບເພື່ອການພັດທະນານ້ຳມັນເຊື້ອໄຟຊີວະພາບ ເຊິ່ງມີມູນຄ່າເກືອບທັງໝົດ10 ຕື້ໂດລາ ແລະ ມີລາຍງານວ່າໄດ້ໃຫ້ຄຳໝັ້ນສັນຍາເງິນໄວ້ຈຳນວນ 1.1 ຕື້ໂດລາ ເພື່ອຈະໃຊ້ໃນການສະໜັບສະໜູນທາງດ້ານພື້ນຖານໂຄງລ່າງ. ບໍລິສັດນ້ຳມັນເຊື້ອໄຟເປີຕາມິນາ (Pertamina) ເຊິ່ງເປັນບໍລິສັດນ້ຳມັນເຊື້ອໄຟຂອງລັດ ແມ່ນຕ້ອງໄດ້ຂາຍນ້ຳມັນເຊື້ອໄຟປະສົມກັບນ້ຳມັນເຊື້ອໄຟຊີວະພາບ 5%.

ໃນທ້າຍປີ 2007-2008, ລາຄາພືດອາຫານສັດ ທີ່ໃຊ້ຜະລິດນ້ຳມັນເຊື້ອໄຟຊີວະພາບໄດ້ພຸ່ງສູງຂຶ້ນ, ແຜນການເພື່ອການພັດທະນາໃໝ່ໄດ້ຖືກຢຸດຊະງັກ, ໂຮງງານກັ່ນຫຼາຍແຫ່ງໄດ້ຢຸດການດຳເນີນການ ແລະ ຜູ້ຜະລິດຫັນໄປເຮັດການສົ່ງອອກໄປຫາບັນດາປະເທດ OECD. ການຂາດທຶນຂອງບໍລິສັດ Pertamina ເນື່ອງມາຈາກການປະສົມນ້ຳມັນຊີວະພາບ ແມ່ນມີຈຳນວນລວມທັງໝົດປະມານ 40 ລ້ານໂດລາ ແຕ່ປີ 2006 ຫາ ເດືອນມີຖຸນາ 2008, ເຊິ່ງເປັນຄ່າໃຊ້ຈ່າຍທີ່ລັດຖະບານຕ້ອງແບກຫາບ ນອກເໜືອໄປຈາກການຊ່ວຍເຫຼືອໃຫ້ກັບນ້ຳມັນເຊື້ອໄຟປິໂຕຣລຽມທີ່ມີຢູ່.

ໃນປີ 2008, ລາຄາຫຼຸດລົງອີກ ແລະ ການຜະລິດນ້ຳມັນເຊື້ອໄຟຊີວະພາບໃນອິນໂດເນເຊຍເລີ່ມມີທ່າເພີ່ມຂຶ້ນອີກ. ລັດຖະບານອິນໂດເນເຊຍທົບທວນ ເປົ້າໝາຍການນຳໃຊ້ນ້ຳມັນເຊື້ອໄຟຊີວະພາບຂອງຕົນເອງ ເປັນນ້ຳມັນເຊື້ອໄຟໃຊ້ຂົນສົ່ງລົງເຫຼືອ 2.5% ໃນປີ 2010. ການຕ່ອນ ຜັນນີ້ແມ່ນບໍ່ເປັນທີ່ຍອມຮັບຂອງຜູ້ຜະລິດ ແຕ່ເປັນການຫຼຸດຜ່ອນພາລະຕໍ່ກັບດ້ານເສດຖະກິດ. ອີງຕາມ IISD, ການປ່ອຍລາຄານ້ຳມັນໃຫ້ສູງຂຶ້ນ ແມ່ນເປັນຜົນປະໂຫຍດຕໍ່ກັບເສດຖະກິດຂອງອິນໂດເນເຊຍໃນໄລຍະຍາວ, ເປັນການຫຼຸດຜ່ອນພາລະເລື່ອງການຊ່ວຍເຫຼືອ, ສົ່ງເສີມປະສິດທິພາບຂອງນ້ຳມັນເຊື້ອໄຟ ແລະ ເພີ່ມການຮັບປະກັນທາງດ້ານພະລັງງານ.

(ແຫຼ່ງຂໍ້ມູນ: ການລິເລີ່ມການຊ່ວຍເຫຼືອທົ່ວໂລກຂອງ IISD. 2008. ນ້ຳມັນເຊື້ອໄຟຊີວະພາບ – ຢູ່ໃນລາຄາໃດ? ການສະໜັບສະໜູນເລື່ອງອີທານອລ ແລະ ນ້ຳມັນກາຊ່ວນຊີວະພາບຂອງລັດຖະລານຢູ່ເມນອິນໂດເນເຊຍ. ເຈັນນີວາ, ສະວິດເຊີແລນ)

[10] LLTP/GTZ. 2007. *ການສຶກສາກ່ຽວກັບການຂັດແຍ່ງທີ່ດິນ ແລະການແກ້ໄຂຂໍ້ຂັດແຍ່ງ ຢູ່ໃນ ສປປ ລາວ.*

ການຂົນສົ່ງແກ້ສເຮືອນແກ້ວ (GHG) ເພື່ອຊົດເຊີຍຕໍ່ການປ່ອຍອອກໄປຈາກການຕັດໄມ້ທຳລາຍປ່າ).

ນອກຈາກນັ້ນ, ເຊັ່ນດຽວກັບພືດອື່ນໆອີກຫຼາຍອັນ, ການຂະຫຍາຍການຜະລິດພືດນ້ຳມັນເຊື້ອໄຟຊີວະພາບ ຍັງສ້າງຄວາມເປັນຫ່ວງກ່ຽວກັບການນຳໃຊ້ນ້ຳ. ຢູ່ໃນອິນເດຍ, ການຜະລິດເອທານອລ 1 ລິດ ຈາກອ້ອຍແມ່ນຈຳເປັນຕ້ອງໃຊ້ນ້ຳຊົນລະປະທານ ທີ່ຂາດແຄນຢູ່ແລ້ວນັ້ນຈຳນວນເກືອບ 3500 ລິດ; ກົງກັນຂ້າມ, ຢູ່ໃນປະເທດເບຣຊິນ ອ້ອຍທີ່ປູກໃນນ້ຳຝົນສາມາດຜະລິດເອທານອລ 1 ລິດໄດ້ຈາກການໃຊ້ນ້ຳຊົນລະປະທານ ພຽງແຕ່ 90 ລິດເທົ່ານັ້ນ[11]. ພືດທີ່ໃຊ້ເຮັດນ້ຳມັນເຊື້ອໄຟຊີວະພາບສະເພາະເຊັ່ນ: ໝາກເຍົາ ແລະ ເຂົ້າຝ້າງຫວານ ແມ່ນຕ້ອງການນ້ຳໜ້ອຍກວ່າ ແລະ ແຂ່ງຂັນໄດ້ດີກວ່າກັບພືດອາຫານ. ຢູ່ໃນ ສປປ ລາວ, ການປູກອ້ອຍ ແລະ ມັນຕົ້ນລະດູຝົນອາດຈະມີທາງເປັນໄປໄດ້.

ການພັດທະນາການປູກພືດ ວັດຖຸດິບເຮັດນ້ຳມັນເຊື້ອໄຟຊີວະພາບ ແລະ ສິ່ງອຳນວຍຄວາມສະດວກ ໃນການປຸງແຕ່ງແມ່ນຕ້ອງມີການວາງແຜນ ທີ່ຮອບຄອບ, ເອົາໃຈໃສ່ການປະເມີນຜົນທາງດ້ານສິ່ງແວດລ້ອມ ແລະ ການຕິດຕາມ. ມີຜົນປະໂຫຍດທາງດ້ານສະພາບແວດລ້ອມ ແລະ ເສດຖະກິດຫຼາຍຈາກການຜະລິດ ແລະ ນຳໃຊ້ນ້ຳມັນເຊື້ອໄຟຊີວະພາບ ເທົ່າທີ່ມີສະພາບທາງດ້ານພູມສາດທີ່ໃກ້ຄຽງກັນ ຕາມທີ່ເປັນໄປໄດ້ ແລະ ໂດຍການຜະລິດພືດວັດຖຸດິບ ແລະ ນ້ຳມັນເຊື້ອໄຟໃນລະດັບທີ່ຫຼາກຫຼາຍ.

<u>ຜົນກະທົບຕໍ່ຊາວກະສິກອນ.</u> ຊາວກະສິກອນຈະຢູ່ໃນແຖວໜ້າຂອງຜົນກະທົບຕ່າງໆທີ່ມາໃນທາງດ້ານບວກ ແລະ ດ້ານລົບຈາກການພັດທະນານ້ຳມັນເຊື້ອໄຟຊີວະພາບ. ຖ້າດຳເນີນການໄປໄດ້ດີແລ້ວ, ການຜະລິດນ້ຳມັນເຊື້ອໄຟຊີວະພາບ ສາມາດສ້າງກະແສລາຍຮັບອັນສຳຄັນ ໃຫ້ກັບຊາວກະສິກອນ ແລະ ເປັນແຫຼ່ງພະລັງງານທາງເລືອກ, ຊ່ວຍໃນການຫຼຸດຫ່ອນຄວາມທຸກຍາກ. ເຖິງແນວໃດກໍ່ຕາມ ຍັງມີສິ່ງທ້າທາຍຫຼາຍຢ່າງຢູ່. ພາຍໃຕ້ຕົວແບບການປູກຕົ້ນໄມ້ນັ້ນ, ມີຄວາມສ່ຽງທີ່ຊາວກະສິກອນໃນຊົນນະບົດ ຈະສູນເສຍທີ່ດິນກະສິກຳ, ພື້ນທີ່ປ່າໄມ້ ແລະ ເຂດໜອງບຶງໄປໃຫ້ກັບການປູກໄມ້, ໂດຍສະເພາະຖ້າແມ່ນຄວາມຕ້ອງການ ຂອງການລົງທຶນແລ້ວນັ້ນ ກົດໝາຍທີ່ດິນ ແລະ ປ່າໄມ້ ແມ່ນບໍ່ສາມາດຈັດຕັ້ງປະຕິບັດໄດ້ຢ່າງເຕັມທີ່. ການພັດທະນາສວນປູກຂະໜາດໃຫຍ່ ອາດຈະນຳໄປສູ່ການຈ້າງງານ ທີ່ບໍ່ມີຄວາມສະເໝີພາບອີກດ້ວຍ ແລະ ມີການຍ້າຍພາຍໃນ ເພື່ອໃຫ້ໄດ້ຕາມຄວາມຕ້ອງການຂອງແຮງງານ. ຕົວຢ່າງ, ມີເນື້ອທີ່ດິນຫຼາຍເຮັກຕາ ທີ່ໄດ້ເອົາໃຫ້ເພື່ອການປູກຢາງພາລາ, ມັນຕົ້ນ ແລະ ສາລີ ເພື່ອການຄ້າຢູ່ໃນເມືອງເລົ່າງາມ, ແຂວງສາລະວັນ ໂດຍທີ່ມີບາງບ້ານໄດ້ເອົາດິນກະສິກຳເກືອບທັງໝົດໃຫ້ເຮັດ, ແຕ່ບໍ່ແມ່ນວ່າ ຊາວບ້ານທຸກຄົນທີ່ຈະໄດ້ຮັບຜົນປະ�โຫຍດຈາກການຈ້າງແຮງງານໄປເຮັດສວນຕາມປົກກະຕິນັ້ນ[12]. ການເຮັດສັນຍາຜູກພັນສອງສົ່ນກັບຜູ້ຜະລິດຂະໜາດນ້ອຍ ຍັງຈຳເປັນຕ້ອງມີເງື່ອນໄຂສະເພາະ ເພື່ອເຮັດໃຫ້ປະສົບຜົນສຳເລັດ: ການສະໜັບສະໜູນ ແລະ ການສົ່ງເສີມຊາວກະສິກອນ; ການຕິດຕາມເພື່ອໃຫ້ຮັບປະກັນວ່າ ສັນຍາໄດ້ຮັບການປະຕິບັດ ແລະ ດັ່ງນັ້ນ ການຄ້ຳປະກັນດ້ານສະບຽງອາຫານ ບໍ່ຢູ່ໃນພາວະຄວາມສ່ຽງ; ແລະ ການເຂົ້າເຖິງຕະຫຼາດ ແລະ ຂໍ້ມູນດ້ານຕະຫຼາດ. ການຄົ້ນຄວ້າທີ່ທາງ WWF ແລະ SNV ໄດ້ເຮັດນັ້ນ ແມ່ນໄດ້ສະແດງໃຫ້ເຫັນວ່າ ຜູ້ຜະລິດຂະໜາດນ້ອຍແມ່ນໄດ້ຮັບຜົນປະ�โຫຍດພຽງເລັກນ້ອຍຈາກໂຄງການປູກອ້ອຍ ແລະ ໝາກເຍົາ ຢູ່ໃນ ສປປ ລາວ. ທັງຊາວກະສິກອນຜູ້ເຮັດສັນຍາ ແລະ ຜູ້ຮັບຈ້າງລາຍວັນໄດ້ຮັບຜົນຕອບແທນ ໜ້ອຍກວ່າແຮງງານຂອງເຂົາເຈົ້າ ປຽບທຽບກັບການປູກເຂົ້າຂາຍ[13]. ເຖິງແນວໃດກໍ່ຕາມ, ຖ້າສິ່ງທ້າທາຍ

ເຫຼົ່ານີ້ໄດ້ຮັບການເອົາໃຈໃສ່ແລ້ວ, ການຜະລິດນ້ຳມັນເຊື້ອໄຟຊີວະພາບຂະໜາດນ້ອຍ ຈະສາມາດປະກອບສ່ວນ ຕໍ່ການພັດທະນາຊົນນະບົດ.

3. ທາງເລືອກດ້ານນະ�โยบาย

ການພັດທະນານ້ຳມັນເຊື້ອໄຟຢູ່ໃນ ສປປ ລາວ ແມ່ນໄດ້ຕັ້ງເປົ້າໃຫ້ບັນລຸເປົ້າໝາຍທາງດ້ານເສດຖະກິດ, ສິ່ງແວດລ້ອມ ແລະ ສັງຄົມ, ລວມໄປເຖິງ: ການປັບປຸງ ການຮັບປະກັນທາງດ້ານພະລັງງານ; ສົ່ງເສີມການພັດທະນາຊົນນະບົດ; ແລະ ເພື່ອສ້າງໃຫ້ມີການເຕີບໂຕທາງດ້ານເສດຖະກິດ ແລະ ດຶງດູດການລົງທຶນຢູ່ໃນຂະແໜງການໃໝ່[14]. ເປົ້າໝາຍເຫຼົ່ານີ້ຄວນຈະຊີ້ຄວາມພະຍາຍາມເພື່ອພັດທະນານ້ຳມັນເຊື້ອໄຟຊີວະພາບ ເພື່ອຮັບປະກັນວ່າ ເຂົາເຈົ້າໃຫ້ການສະໜັບສະໜູນການພັດທະນາທີ່ຍືນຍົງ ແລະ ບໍ່ເປັນອັນຕະລາຍກັບມັນ. ທາງເລືອກດ້ານນະ�โยบาย ເພື່ອຊີ້ນຳຂະແໜງນ້ຳມັນເຊື້ອໄຟຊີວະພາບລວມມີຄື:

- ***ການພັດທະນາລະບົບການວາງແຜນນຳໃຊ້ທີ່ດິນແຫ່ງຊາດ.*** ລັດຖະບານ ລາວ ໄດ້ດຳເນີນຂັ້ນຕອນທີ່ເປັນທ່າກ້າວ ໃນການດຳເນີນການປະເມີນສິ່ງແວດລ້ອມທາງຍຸດທະສາດ (SEA) ຢູ່ໃນຂະແໜງການນີ້ເປັນທີ່ຮຽບຮ້ອຍແລ້ວ, ດ້ວຍການແຈ້ງເຖິງ ການສ້າງຮ່າງດຳລັດກ່ຽວກັບນ້ຳມັນເຊື້ອໄຟຊີວະພາບ. ນອກຈາກນັ້ນ, ການແນະນຳລະບົບການວາງແຜນການນຳໃຊ້ທີ່ດິນຢູ່ໃນຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນແມ່ນເປັນເປົ້າໝາຍໜຶ່ງ ຂອງຍຸດທະສາດປ່າໄມ້ແຫ່ງຊາດຮອດປີ 2020 ຂອງລັດຖະບານ. ເນື່ອງຈາກວ່າ ການຜະລິດນ້ຳມັນເຊື້ອໄຟຊີວະພາບຂະໜາດໃຫຍ່ ແມ່ນຕ້ອງການທີ່ດິນ ແລະ ແຮງງານຈຳນວນຫຼາຍ ເຊັ່ນດຽວກັນກັບການປູກໄມ້ອຸດສາຫະກຳອື່ນໆ, ແຜນການພັດທະນານ້ຳມັນເຊື້ອໄຟຊີວະພາບບໍ່ຄວນຈະດຳເນີນການຕໍ່ໄປ ໂດຍທີ່ບໍ່ມີການຈັດຕັ້ງປະຕິບັດກວດກາທາງດ້ານເສດຖະກິດ, ສິ່ງແວດລ້ອມ ແລະ ສັງຄົມຢ່າງເຕັມທີ່. ລະບົບການວາງແຜນນຳໃຊ້ທີ່ດິນແຫ່ງຊາດທີ່ຮັດກຸມ ແລະ ການປະເມີນຊັບພະຍາກອນແຮງງານຂອງ ສປປ ລາວ ຢ່າງເຕັມທີ່ອາດຈະຊ່ວຍໃນການກຳນົດວິທີການທີ່ຈະຈັດແບ່ງທີ່ດິນເພື່ອປູກຢາງພາລາ, ປູກເຂົ້າ ຫຼື ພືດນ້ຳມັນເຊື້ອໄຟຊີວະພາບໄດ້.
- ***ນຳໃຊ້ວິທີການແບບປະສົມປະສານ.*** ຖ້າຫາກວ່າການຫຼຸດຜ່ອນການປ່ອຍໄອເສຍອອກມາ ແລະ ການເພີ່ມການຮັບປະກັນດ້ານພະລັງງານເປັນເປົ້າໝາຍອັນໜຶ່ງ ຂອງການພັດທະນານ້ຳມັນເຊື້ອໄຟຊີວະພາບແລ້ວ, ຈຳເປັນທີ່ຈະຕ້ອງມີຍຸດທະສາດໂດຍລວມ ຂອງຂະແໜງການຂົນສົ່ງ. ນ້ຳມັນເຊື້ອໄຟຊີວະພາບ ຈະມີປະສິດທິພາບຫຼາຍຂຶ້ນ ຖ້າຫາກວ່າມີການລິເລີ່ມເພື່ອ: ຫຼຸດຜ່ອນການຊົມໃຊ້ພະລັງງານ, ໂດຍສະເພາະແມ່ນນ້ຳມັນເຊື້ອໄຟເພື່ອການຂົນສົ່ງ ແລະ ຜະລິດກະແສໄຟຟ້າ; ເພີ່ມປະສິດທິພາບຂອງການນຳໃຊ້ພະລັງງານ; ແລະ ນຳໃຊ້ທາງເລືອກອື່ນເຊັ່ນ: ພາຫະ

[11] IWMI. 2008. "ຜົນສະທ້ອນຕໍ່ກັບນ້ຳຂອງພືດໃຫ້ນ້ຳມັນເຊື້ອໄຟຊີວະພາບ: ການເຂົ້າໃຈເຖິງຜົນໄດ້ຜົນເສຍ ແລະການລະບຸທາງເລືອກ". *ບົດສັງລວມຫຍໍ້ດ້ານນະ�โยบายทางน้ำ,* ສະບັບທີ 30.

[12] NERI ແລະ IUCN. 2010. *ບົດລາຍງານຜົນກະທົບທາງດ້ານເສດຖະກິດ, ສັງຄົມ ແລະສິ່ງແວດລ້ອມຂອງການລົງທຶນໃນແຂວງສາລະວັນ* [ສະບັບຮ່າງ, ກໍລະກົດ 2010].

[13] ການສຶກສາຄົ້ນຄວ້າສະແດງໃຫ້ເຫັນວ່າຊາວກະສິກອນທີ່ເຂົ້າຮ່ວມໃນຮູບແບບການເຮັດສັນຍາສອງສົ່ນນັ້ນໄດ້ຮັບຄ່າຕອບແທນສຸດທິໃນລະດັບຈາກ 1.36 ໂດລາ/ມື້ (ສຳລັບອ້ອຍ) ແລະ 1.50 ໂດລາ/ມື້ ສຳລັບໝາກເຍົາຫີນ, ປຽບທຽບກັບ 2.5 ໂດລາ/ມື້ ສຳລັບການປູກເຂົ້າຂາຍ. ຜູ້ໄປຈ້າງແຮງງານແມ່ນໄດ້ຮັບຜົນຕອບແທນ 1.54 ໂດລາ/ມື້ ສຳລັບອ້ອຍ ແລະ 2.12 ໂດລາ/ມື້ ສຳລັບໝາກເຍົາຫີນ, ຍັງໜ້ອຍກວ່າການເຮັດນາຂາຍ. (ແຫຼ່ງຂໍ້ມູນ: WWF & SNV. 2009. *ການພັດທະນານ້ຳມັນຊີວະພາບ ໃນກຸ່ມຄົນທຸກທີ່ສຸດແບບຍືນຍົງ ໃນພາກພື້ນແມ່ນ້ຳຂອງ ແລະເນປານ*).

[14] ຮ່າງດຳລັດກ່ຽວກັບການສົ່ງເສີມນ້ຳມັນເຊື້ອໄຟຊີວະພາບ, ສຳນັກງານນາຍົກ ຂອງ ສປປ ລາວ, 2008.

ນະທີ່ແລ່ນດ້ວຍນ້ຳມັນເຊື້ອໄຟ ທີ່ເປັນທາງເລືອກ ຫຼື ໃຊ້ໄຟຟ້າ. ການລິເລີ່ມການນຳໃຊ້ພະລັງງານ ທີ່ມີປະສິດທິພາບອາດຈະຊ່ວຍໃຫ້ມີການຫຼຸດຜ່ອນການໃຊ້ພະລັງງານໄດ້ຫຼາຍ ແລະ ຫຼຸດຜ່ອນການປ່ອຍໄອເສຍອອກມາໄດ້ ໃນລາຄາທີ່ຖືກກວ່າເມື່ອປຽບທຽບກັບ ການທົດແທນດ້ວຍທາງເລືອກອື່ນທີ່ມີລາຄາແພງ, ໃນຂະນະທີ່ຍັງເຮັດໃຫ້ເກີດຜົນກະທົບຕໍ່ສິ່ງແວດລ້ອມ ແລະ ຜູ້ທຸກຍາກໃນຊົນນະບົດໄດ້ໜ້ອຍກວ່າ[15].

- ***ການອຳນວຍຄວາມສະດວກ ແລະ ການຊ່ວຍໃຫ້ຕະຫຼາດພາຍໃນເຕີບໂຕ.*** ຖ້າທຳກວ່າຈຸດປະສົງໄລຍະຍາວ ຂອງການພັດທະນາອຸດສາຫະກຳນ້ຳມັນເຊື້ອໄຟຊີວະພາບແມ່ນ ເພື່ອຊ່ວຍໃຫ້ເສດຖະກິດມີການເຕີບໂຕ ແລະ ມີການພັດທະນາທີ່ຍືນຍົງບັນລຸຜົນແລ້ວ ແມ່ນຈຳເປັນຕ້ອງມີຕະຫຼາດພາຍໃນທີ່ໃຊ້ນຳມັນເຊື້ອໄຟຊີວະພາບ ເຂົ້າໃນການຂົນສົ່ງ ແລະ ການສ້າງພະລັງງານ. ນອກຈາກນັ້ນ ຜົນປະ�โຫຍດຂອງນ້ຳມັນເຊື້ອໄຟຊີວະພາບ ຈະຊ່ວຍຮັບປະກັນທາງດ້ານສິ່ງແວດລ້ອມ ແລະ ພະລັງງານຈະບັນລຸຜົນໄດ້ ກໍ່ຕໍ່ເມື່ອນ້ຳມັນເຊື້ອໄຟຊີວະພາບນັ້ນໄດ້ຖືກນຳໃຊ້ຢູ່ພາຍໃນປະເທດເທົ່ານັ້ນ. ອັນນີ້ຈຳເປັນຕ້ອງມີການແຊກແຊງທາງດ້ານນະ�โยบายໄລຍະຍາວ, ລວມທັງການສະໜັບສະໜູນເພື່ອພັດທະນາການປູກພືດວັດຖຸດິບໃຫ້ຢູ່ລອດ, ເພີ່ມຈຳນວນຂອງຜູ້ຜະລິດຂະໜາດນ້ອຍ, ແລະ ແນະນຳການປຸງແຕ່ງໃນລະດັບທ້ອງຖິ່ນ, ການກະຈາຍ ແລະ ເຕັກໂນโลยีທີ່ນຳໃຊ້ນ້ຳມັນເຊື້ອໄຟຊີວະພາບ ຫຼື ນ້ຳມັນປະສົມເຊື້ອໄຟຊີວະພາບເຂົ້າມາ[16]. ການຫຼຸດຜ່ອນການຖົມຂຸມນ້ຳມັນເຊື້ອໄຟປິໂຕຣລຽມສາມາດຊ່ວຍຫຼຸດຜ່ອນໄດ້ ໃນເລື່ອງພາລະຂອງລັດຖະບານ ແລະ ການນຳໃຊ້ນ້ຳມັນເຊື້ອເພີງ. ພາຫະນະຂົນສົ່ງຂອງລັດ ແລະ ຂອງມວນຊົນຄວນຈະມີການລິເລີ່ມ ການນຳໃຊ້ນ້ຳມັນເຊື້ອໄຟຊີວະພາບເປັນຕົວຢ່າງ. ນອກຈາກນັ້ນ, ການນຳເຂົ້ານ້ຳມັນເຊື້ອໄຟຊີວະພາບຈາກປະເທດອື່ນອາດຈະມີຄວາມຈຳເປັນເພື່ອຊ່ວຍສົ່ງເສີມຕະຫຼາດພາຍໃນປະເທດ.

- ***ເອື້ອອຳນວຍການຜະລິດຂະໜາດນ້ອຍຫຼາຍກວ່າການຜະລິດຂະໜາດໃຫຍ່.*** ການເຮັດພັນທະຕໍ່ກັບການພັດທະນາຊົນນະບົດ ແລະ ການຂະຫຍາຍນ້ຳມັນເຊື້ອໄຟຊີວະພາບ ອາດຈະສາມາດບັນລຸຜົນໄດ້ດີກວ່າໂດຍຜ່ານການພັດທະນາ ການປູກພືດນ້ຳມັນເຊື້ອໄຟຂະໜາດນ້ອຍ ເຊິ່ງໃນນັ້ນຊາວກະສິກອນ (ແລະ ບໍ່ແມ່ນບໍລິສັດໃຫຍ່) ເປັນຜູ້ໄດ້ຮັບຜົນປະ�โຫຍດ. ການປູກພືດວັດຖຸດິບເຫຼົ່ານີ້ ຄວນຈະອອກແບບໃຫ້ເປັນການປະສົມປະສານ ນັ້ນຄືພືດທີ່ໃຊ້ເປັນນ້ຳມັນເຊື້ອໄຟຊີວະພາບ ຄວນຈະໄດ້ຮັບການປຸງແຕ່ງ ແລະ ຂາຍຢູ່ໃນທ້ອງຖິ່ນ ເພື່ອຮັກສາລາຍຮັບໄວ້ໃນເສດຖະກິດທ້ອງຖິ່ນ.

- ***ຫຼຸດຜ່ອນຜົນກະທົບທາງລົບ, ເພີ່ມຜົນກະທົບທາງບວກ.*** ເຖິງແມ່ນຈະເລັງເຫັນໄດ້ວ່າ ນ້ຳມັນເຊື້ອໄຟຊີວະພາບ ຈະເປັນການສະໜັບສະໜູນການພັດທະນາທີ່ຍືນຍົງ, ຄວາມສ່ຽງທາງດ້ານສິ່ງແວດລ້ອມ ແລະ ສັງຄົມຈາກການພັດທະນານ້ຳມັນເຊື້ອໄຟຊີວະພາບ ກໍ່ເປັນສິ່ງສຳຄັນ. ເຊັ່ນດຽວກັນກັບພືດອຸດສາຫະກຳອື່ນໆ, ການປູກພືດວັດຖຸດິບນ້ຳມັນເຊື້ອໄຟຊີວະພາບມີຄວາມເປັນໄປໄດ້ ທີ່ຈະເຮັດໃຫ້ເກີດຜົນກະທົບທາງລົບເຊັ່ນ: ການທຳລາຍປ່າໄມ້ ແລະ ການສູນເສຍຊີວະນາໆພັນ, ການນຳໃຊ້ຊັບພະຍາກອນນ້ຳເກີນຂະໜາດ, ການຂັດແຍ້ງເລື່ອງທີ່ດິນ, ການແຕກແຍກຄວາມສາມັກຄີໃນສັງຄົມ ແລະ ບັນຫາການຄ້ຳປະກັນດ້ານສະບຽງອາຫານ. ເຖິງແນວໃດກໍ່ຕາມ, ມີຫຼາຍວິທີທາງທີ່ຈະຫຼຸດຜ່ອນບັນຫາເຫຼົ່ານີ້ໃຫ້ໜ້ອຍລົງໄດ້ຄື: ສົ່ງເສີມການປູກຢູ່ໃນຄົວເຮືອນ ຂະໜາດນ້ອຍທີ່ມີຄວາມຫຼາກຫຼາຍ ໃຫ້ຫຼາຍກວ່າຈະເປັນການປູກ ແຕ່ພືດຊະນິດດຽວຂະໜາດໃຫຍ່; ການນຳໃຊ້ພືດວັດຖຸດິບຫຼາຍຊະນິດ ເພື່ອການຜະລິດນ້ຳມັນເຊື້ອໄຟຊີວະພາບ;; ປູກພືດທີ່ໃຊ້ນ້ຳຝົນເຊັ່ນ: ໝາກເຍົາ ແລະ ເຂົ້າຝ້າງ ຫຼາຍກວ່າຈະປູກພືດທີ່ໃຊ້ນ້ຳຊົນລະປະທານ; ປູກພືດໃນດິນທີ່ບໍ່ໄດ້ໃຊ້ປະโຫຍດຫຼາຍແລ້ວເທົ່ານັ້ນ; ຈັດຕັ້ງປະຕິບັດການຄວບຄຸມການນຳໃຊ້ປຸ໋ຍເຄມີ ແລະ ຢາປາບສັດຕູພືດ; ເອົາໃຈໃສ່ຕໍ່ກັບຜົນກະທົບທາງດ້ານສິ່ງແວດລ້ອມ ແລະ ສັງຄົມຂອງໂຮງງານປຸງແຕ່ງ. ພ້ອມທັງຮັບປະກັນວ່າມາດຕະຖານດ້ານ ESIAs ແລະ ແຜນການຄຸ້ມຄອງສິ່ງແວດລ້ອມ ໄດ້ຖືກກະກຽມຢ່າງຮັດກຸມສຳລັບທຸກໂຄງການປູກພືດ ແລະ ນ້ຳມັນເຊື້ອໄຟຊີວະພາບ. ຂະນະທີ່ລັດຖະບານລາວ ອາດຈະຕ້ອງພິຈາລະນານະ�โยบายຕ່າງໆ ເພື່ອຮັບປະກັນວ່າການດຳເນີນງານເຫຼົ່ານີ້ໄດ້ຮັບການປະຕິບັດຢ່າງສອດຄ່ອງ ຜູ້ລົງທຶນກໍສາມາດປັບປຸງຂີດຄວາມສາມາດຂອງຕົນເພື່ອເຂົ້າໃຈເຖິງຄວາມເຊື່ອມโยงຂອງລະບຽບກົດໝາຍຕໍ່ກັບໂຄງການຂອງເຂົາເຈົ້າ ແລະຄວາມສາມາດປະຕິບັດໃຫ້ສອດຄ່ອງ. ຍົກຕົວຢ່າງ ຜູ້ລົງທຶນສາມາດສຸມໃສ່ການປະຕິບັດພັນທະທາງດ້ານ ESIA ໃຫ້ໄດ້ເຕັມສ່ວນຢ່າງຈິງຈັງ ໂດຍການດຳເນີນ ESIAs *ທີ່ມີຄຸນນະພາບເທົ່ານັ້ນ*. ຄຳແນະນຳ ແລະ ເຄື່ອງມືຕ່າງໆ ເພື່ອຮັບປະກັນຄວາມຍືນຍົງຂອງນ້ຳມັນເຊື້ອໄຟຊີວະພາບແມ່ນໄດ້ສ້າງຂຶ້ນມາ ແລະ ກຳລັງຖືກພັດທະນາຂຶ້ນໂດຍຫຼາຍອົງການຈັດຕັ້ງ (ເບິ່ງໃນ Box 3).

Box 3. ເຄື່ອງມືສຳລັບນ້ຳມັນເຊື້ອໄຟຊີວະພາບທີ່ໃຫ້ຄວາມຍືນຍົງກວ່າ

ໃນ 2008, IUCN ໄດ້ຕີພິມບົດແນະນຳ "ການຈັດຕັ້ງການຜະລິດພະລັງງານຊີວະພາບຍືນຍົງ: ການສັງລວມເຄື່ອງມື ແລະ ວິທີການ" ທີ່ໃຫ້ລາຍລະອຽດຂອງທາງເລືອກທີ່ມີຢູ່ ເພື່ອການເພີ່ມຄວາມຍືນຍົງຂອງນ້ຳມັນເຊື້ອໄຟຊີວະພາບ. ເຄື່ອງມືເຫຼົ່ານີ້ປະກອບດ້ວຍ:

- **ການວິເຄາະຜົນກະທົບພະລັງງານຊີວະພາບ (BIAS)**, ເປັນວິທີການໜຶ່ງທີ່ທາງ FAO ກຳລັງພັດທະນາຂຶ້ນຢູ່ໃນປະຈຸບັນ ເຊິ່ງໃຊ້ຊຸດຂອງເຄື່ອງມື GHG, ທີ່ດິນ ແລະ ນ້ຳ ທີ່ມີຢູ່ ເພື່ອປະເມີນຜົນກະທົບ ຂອງລະບົບການຜະລິດພະລັງງານຊີວະພາບຕ່າງໆ.
- **ບົດແນະນຳ ແລະ ໂຄງການຍັ້ງຍືນກະສິກຳອິນຊີ ແລະ ຄວາມຍືນຍົງ** ສາມາດປະຍຸກໃຊ້ເປັນທ່າແຮງໄດ້ກັບພືດນ້ຳມັນເຊື້ອໄຟຊີວະພາບ.
- **ປ່າທີ່ມີຄ່າໃນການອະນຸລັກສູງ** (HCVF) ທີ່ຖືກພັດທະນາຂຶ້ນມາໂດຍທາງສະພາເຈົ້າໜ້າທີ່ປ່າໄມ້ (FSC), ມຸ່ງເນັ້ນທີ່ຈະຮັບປະກັນໃຫ້ມີການຮັກສາພື້ນທີ່ບ່ອນມີຄຸນຄ່າສູງທາງດ້ານນິເວດວິທະຍາ, ວັດທະນະທຳ, ທັດສະນິຍະພາບ ແລະ ເສດຖະກິດ-ສັງຄົມ ແລະ ປັບປຸງໃຫ້ດີຂຶ້ນ ຢູ່ພາຍໃນສະພາບແວດລ້ອມຂອງການຜະລິດ. ມັນຍັງໄດ້ຖືກນຳມາອ້າງອີງຢູ່ໃນກອງປະຊຸມໂຕະມົນກ່ຽວກັບຄວາມຍືນຍົງ ແຕ່ລະອັນຂອງປາລ້ມ, ຖົ່ວເຫຼືອງ ແລະ ນ້ຳມັນເຊື້ອໄຟຊີວະພາບ.
- **ກອງປະຊຸມໂຕະມົນກ່ຽວກັບນ້ຳມັນເຊື້ອໄຟຊີວະພາບທີ່ຍືນຍົງ** (RSB) ແມ່ນປະຈຸບັນນີ້ກຳລັງສ້າງຫຼັກການ ແລະ ມາດຖານສຳລັບນ້ຳມັນເຊື້ອໄຟຊີວະພາບຍືນຍົງ ໂດຍການມີຄຳຄິດເຫັນປະກອບສ່ວນ ມາຈາກຫຼາຍພາກສ່ວນກ່ຽວຂ້ອງ. ເຊັ່ນດຽວກັບການຊີ້ນຳທາງດ້ານອຸດສາຫະກຳ, ລັດຖະບານອາດຈະໃຊ້ຫຼັກການ ແລະ ມາດຖານ RSB ເພື່ອຈຳແນກແຫຼ່ງທີ່ມີຄວາມຍືນຍົງ ແລະ ບໍ່ຍືນຍົງ ສຳລັບນ້ຳມັນເຊື້ອໄຟຊີວະພາບ.

(ດາວໂຫຼດເອົາບົດລາຍງານເຕັມສະບັບໄດ້ທີ່: http://cmsdata.iucn.org/downloads/biofuels____compilation_of_tools_final.pdf)

[15] ການລິເລີ່ມການສະໜັບສະໜູນທົ່ວໂລກຂອງ IISD. 2008. *ນ້ຳມັນເຊື້ອໄຟຊີວະພາບ – ໃນລາຄາເທົ່າໃດ? ການສະໜັບສະໜູນເລື່ອງເອທານອລ ແລະນ້ຳມັນກາຊ່ວນຊີວະພາບໃນອິນโดเนเซย.* ເຈັນນີວາ, ສະວິດເຊີແລນ.

[16] ການປຸງແຕ່ງນ້ຳມັນເຊື້ອໄຟຊີວະພາບໃນລະດັບທ້ອງຖິ່ນ (ຕົວຢ່າງ ຈາກໝາກເຍົາຫີນ) ແມ່ນສາມາດປະຕິບັດໄດ້ດີກວ່າການຜະລິດອີທານອລຊີວະພາບຢູ່ໃນລະດັບທ້ອງຖິ່ນ ເຊິ່ງຕ້ອງການພະລັງງານ, ເຕັກນິກ ແລະການເງິນຫຼາຍ.

- ***ບໍ່ແມ່ນວ່າທຸກໂຄງການນ້ຳມັນເຊື້ອໄຟຊີວະພາບຈະຊ່ວຍສ້າງໃຫ້ມີຄວາມສະເໝີພາບ:*** ການພັດທະນານ້ຳມັນເຊື້ອໄຟຊີວະພາບ ຈະຮຽກຮ້ອງໃຫ້ມີການສະໜັບສະໜູນຂອງລັດຖະບານ ແລະ ການລົງທຶນເພີ່ມຂຶ້ນ. ເຖິງແນວໃດກໍ່ຕາມ, ບໍ່ແມ່ນວ່າທຸກໂຄງການນ້ຳມັນເຊື້ອໄຟຊີວະພາບ ຈະມີທ່າແຮງຄືກັນໝົດທີ່ຈະປະກອບສ່ວນ ຕໍ່ການພັດທະນາທີ່ຍືນຍົງ. ແທນທີ່ຈະເປັນການຍົກເວັ້ນພາສີ/ການສຳປະທານ ກັບຂະແໜງການໂດຍລວມແລ້ວ, ລັດຖະບານຍັງສາມາດພິຈາລະນາ ການນຳໃຊ້ສິ່ງຈູງໃຈເພື່ອໃຫ້ສິ່ງຕອບແທນ ກັບຜູ້ທີ່ປະຕິບັດຕາມຮູບແບບຄວາມຍືນຍົງໄດ້ດີ ເຊັ່ນ: ການປູກພືດຂະໜາດນ້ອຍ ທີ່ມີຄວາມຫຼາກຫຼາຍ, ມີແຜນງານດ້ານສິ່ງແວດລ້ອມ ແລະ ສັງຄົມທີ່ດີ ແລະ ມີການປະຕິບັດໄດ້ດີທີ່ສຸດຢູ່ໃນລະດັບສາກົນ.
- ***ພິຈາລະນາທາງເລືອກນ້ຳມັນເຊື້ອໄຟຊີວະພາບອື່ນ.*** ນ້ຳມັນເຊື້ອໄຟຊີວະພາບລຸ່ນທຳອິດ ໃນປະຈຸບັນພຽງແຕ່ຊ່ວຍໃນການພັດທະນາທີ່ຍືນຍົງໄດ້ດ້ວຍການຄວບຄຸມ ແລະ ຕິດຕາມດ້ວຍຄວາມລະມັດລະວັງເທົ່ານັ້ນ. ທາງເລືອກທາງດ້ານນ້ຳມັນຊີວະພາບອື່ນ ກໍ່ຍັງມີຢູ່ເຊັ່ນ: ການແປຮູບຂອງເສດຈາກອຸດສາຫະກຳ ໄປເປັນນ້ຳມັນເຊື້ອໄຟຊີວະພາບ ແລະ ນ້ຳມັນເຊື້ອໄຟຊີວະພາບລຸ່ນທີສອງ. ວິທີການນີ້ບໍ່ພຽງແຕ່ຈະສ້າງແຫຼ່ງນ້ຳມັນເຊື້ອໄຟທີ່ໃໝ່ສະອາດກວ່າ, ແຕ່ຍັງສາມາດປັບປຸງເລື່ອງການຈັດການຂອງເສຍນຳອີກດ້ວຍ. ໃນອະນາຄົດ, ນ້ຳມັນເຊື້ອໄຟຊີວະພາບລຸ່ນທີສອງ ຫຼື ແມ້ແຕ່ລຸ່ນທີສາມ ອາດຈະກາຍເປັນສິ່ງທີ່ມີທ່າແຮງທາງດ້ານເສດຖະກິດ, ໃນຂະນະທີ່ຍັງເປັນການໃຫ້ວິທີການຫຼຸດຄວາມສ່ຽງ ຕໍ່ການຄ້ຳປະກັນສະບຽງອາຫານ, ການປ່ຽນແປງການນຳໃຊ້ທີ່ດິນ, ແລະ ການສູນເສຍຊີວະນາໆພັນ. ການຜະລິດນ້ຳມັນເຊື້ອໄຟລຸ່ນທີໜຶ່ງ ແລະ ທີສອງ ແມ່ນເປັນທາງເລືອກທີ່ມີຄວາມຫວັງ ເພື່ອການພິຈາລະນາຢູ່ໃນ ສປປ ລາວ. ການຊຸກຍູ້ສິ່ງເສີມການຄົ້ນຄວ້າ, ການພັດທະນາ ແລະ ການລົງທຶນເຂົ້າສູ່ແນວທາງທີ່ກ້າວໜ້າ ແລະ ເປັນນະວັດຕະກຳຫຼາຍຂຶ້ນນັ້ນເປັນບົດບາດທີ່ສຳຄັນອັນໜຶ່ງ ສຳລັບອົງການຈັດຕັ້ງຂອງລັດຖະບານ.
- ***ສຶກສາ ແລະ ວິເຄາະທາງເລືອກ.*** ຈຳເປັນຕ້ອງມີໂຄງການສຶກສາ, ວິເຄາະ ແລະ ທົດລອງເພີ່ມເຕີມເພື່ອໃຫ້ຂໍ້ມູນທີ່ຖືກຕ້ອງ ແລະ ສະເພາະຂອງລາວ ທີ່ທາງຜູ້ຕັດສິນຕ້ອງການຢູ່ໃນ ສປປ ລາວ. ໂດຍສະເພາະ, ມີຄວາມຮຽກຮ້ອງຕ້ອງການຂໍ້ມູນທາງດ້ານສະພາບການ ແລະ ລາຍລະອຽດກ່ຽວກັບສະພາບການ ແລະ ການຄາດການໃນອະນາຄົດຫຼາຍຂຶ້ນ, ຕະຫຼາດທີ່ມີທ່າແຮງໃນຕ່າງປະເທດ ແລະ ພາຍໃນປະເທດ, ຕົ້ນທຶນ ແລະ ຜົນປະ�โຫຍດຂອງການນຳໃຊ້ທີ່ດິນ ແລະ ພືດນ້ຳມັນເຊື້ອໄຟຕ່າງໆ, ແລະ ການອອກແບບວິທີການ ສຳລັບນ້ຳມັນເຊື້ອໄຟຊີວະພາບທີ່ຍືນຍົງເຊັ່ນ: ລະບົບປູກຝັງແບບປະສົມປະສານ.

PEI ແມ່ນຫຍັງ?

ອົງການສະຫະປະຊາຊາດ ເພື່ອການພັດທະນາ (UNDP) ແລະອົງການສະຫະປະຊາຊາດ ເພື່ອສິ່ງແວດລ້ອມ (UNEP) ສະໜັບ ສະໜູນ ໂຄງການເຊື່ອມໂยງສິ່ງແວດລ້ອມ ເຂົ້າໃນກົດຈະກຳຫຼຸດຜ່ອນຄວາມທຸກຍາກ (PEI), ເປັນໂຄງການທີ່ເລັ່ງໃສ່ ເພື່ອເຊື່ອມໂยງບັນຫາທາງດ້ານຄວາມທຸກຍາກ ແລະ ສິ່ງແວດລ້ອມເຂົ້າສູ່ຂະບວນການວາງແຜນ ແລະ ການພັດທະນາລະດັບຊາດ. ຈຸດປະສົງຂອງ PEI ຢູ່ໃນ ສປປ ລາວ ແມ່ນເພື່ອຮັບປະກັນການເຕີບໂຕ ທາງດ້ານເສດ ຖະກິດທີ່ໄວຂອງປະເທດ ສ້າງໃຫ້ເກີດການພັດທະນາທີ່ຍືນຍົງ ແບບຮອບດ້ານ. PEI ສະໜັບສະໜູນ ການສ້າງຄວາມຮູ້ຄວາມສາມາດທາງດ້ານ ສະຖາບັນໃນການວາງແຜນ ການພັດທະນາລະດັບຊາດ ແລະ ການຄຸ້ມຄອງການລົງທຶນເອກະຊົນ, ການສ້າງບົດແນະນຳການປະເມີນຜົນກະທົບທາງດ້ານສັງຄົມ ແລະສິ່ງແວດລ້ອມ, ແລະ ການສ້າງການຄົ້ນຄວ້າທີ່ອີງໃສ່ຫຼັກຖານກ່ຽວກັບມູນຄ່າທາງດ້ານສັງຄົມ ແລະ ສິ່ງແວດລ້ອມຕໍ່ກັບການຕັດສິນໃຈນຳໃຊ້ທີ່ດິນ. ໂຄງການໄດ້ຮັບການປະສານງານໂດຍທາງກະຊວງແຜນການ ແລະການລົງທຶນ ໂດຍທີ່ທາງອົງປະກອບຂອງໂຄງການແມ່ນໄດ້ຮັບການຄຸ້ມຄອງ ໂດຍກົມແຜນການ, ກົມສົ່ງເສີມການລົງທຶນ, ສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ ແລະ ອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ.

www.unpei.org/programmes/country_profiles/lao-pdr.asp

ຂໍ້ມູນຕິດຕໍ່ສຳລັບ PEI ຢູ່ໃນ ສປປ ລາວ ແມ່ນ:
pei.lao@undp.org

ບົດລາຍງານຫຍໍ້ດ້ານນະໂยบายนี้ ແມ່ນທາງອົງການ IUCN ປະຈຳລາວ ແລະ LIRE ເປັນຜູ້ກະກຽມ ພາຍໃຕ້ການອຸປະຖຳຂອງໂຄງການ ເຊື່ອມໂยง ສິ່ງແວດລ້ອມ ເຂົ້າໃນກົດຈະກຳຫຼຸດຜ່ອນຄວາມທຸກຍາກ.

IUCN, ອົງການສາກົນເພື່ອການອະນຸລັກທຳມະຊາດ, ຊ່ວຍໂລກຊອກຫາທາງອອກທີ່ເປັນຄວາມຈິງ ຕໍ່ກັບສະພາບແວດລ້ອມທີ່ກົດດັນເກືອບທັງໝົດຂອງພວກເຮົາ ແລະ ສິ່ງທ້າທາຍໃນການພັດທະນາ ໂດຍການສະໜັບສະໜູນການຄົ້ນຄວ້າ ທາງດ້ານວິທະຍາສາດ; ການຄຸ້ມຄອງໂຄງການໃນພາກສະໜາມເກືອບທັງໝົດໃນທົ່ວໂລກ; ແລະ ການນຳເອົາລັດຖະບານ, NGOs, UN, ສົນທິສັນຍາສາກົນ ແລະ ບໍລິສັດຕ່າງໆ ເຂົ້າມາຮ່ວມສ້າງນະโยบาย, ກົດໝາຍ ແລະ ການປະຕິບັດການທີ່ດີທີ່ສຸດ. ຢູ່ໃນເຄືອຄ່າຍທາງດ້ານສິ່ງແວດລ້ອມ ຂອງໂລກໃຫຍ່ທີ່ສຸດ ແລະ ເກົ່າແກ່ທີ່ສຸດນັ້ນ, IUCN ເປັນສະຫະພັນສະມາຊິກປະຊາທິປະໄຕ ຮ່ວມກັບອົງການຈັດຕັ້ງທີ່ເປັນຂອງລັດ ແລະ ຂອງ NGO ຫຼາຍກວ່າ 1,000 ອົງການ ແລະ ມີນັກວິທະຍາສາດ ແລະ ຜູ້ຊ່ຽວຊານອາສາສະໝັກໃນຈຳນວນເກືອບ 11,000 ຄົນຢູ່ໃນ 160 ປະເທດ. ວຽກງານຂອງ IUCN ໄດ້ຮັບການສະໜັບສະໜູນ ໂດຍພະນັກງານມືອາຊີບຫຼາຍກວ່າ 1,000 ຄົນຢູ່ໃນ 60 ກວ່າຫ້ອງການ ແລະ ມີຄູ່ຮ່ວມງານຫຼາຍຮ້ອຍພາກສ່ວນຢູ່ໃນພາກລັດ, NGO ແລະ ພາກເອກະຊົນໃນທົ່ວໂລກ. ສຳນັກງານໃຫຍ່ຂອງ IUCN ແມ່ນຕັ້ງຢູ່ໃນເມືອງ Gland, ໃກ້ກັບນະຄອນຫຼວງ Geneva, ໃນປະເທດ Switzerland.
www.iucn.org

LIRE ຫຼື ສະຖາບັນພະລັງງານທົດແທນຂອງລາວ ແມ່ນອົງການຈັດຕັ້ງການຄົ້ນຄວ້າ ແລະ ການພັດທະນາເອກະລາດທີ່ໄດ້ສ້າງຕັ້ງຂຶ້ນໃນປີ 2006 ແລະ ໄດ້ລົງທະບຽນເປັນອົງການບໍ່ຫວັງຜົນກຳໄລ. ກົດຈະກຳຕົ້ນຕໍຂອງ LIRE ແມ່ນການພັດທະນາວິທີການແກ້ໄຂພະລັງງານທົດແທນ ໃຫ້ດຳເນີນໄປໄດ້ໃນທາງການຄ້າ ເພື່ອເປັນທາງເລືອກໄລຍະຍາວ ກັບການປະຕິບັດແບບທົ່ວໄປ. LIRE ໃຫ້ການບໍລິການດ້ານການຄົ້ນຄວ້າເລື່ອງເຕັກໂນโลยี, ວິທະຍາຍສາດການກະສິກຳ ແລະ ສັງຄົມ-ສິ່ງແວດລ້ອມ ແລະ ເສດຖະກິດ, ການສ້າງຄວາມຮູ້ຄວາມສາມາດ ແລະ ໂຄງການຝຶກອົບ ຮົມ, ແລະ ໃຫ້ການປຶກສາດ້ານການພັດທະນານະโยบายเลื่องพะลังงานทดแทน.
www.lao-ire.org

ການປະກອບຄຳຄິດຄຳເຫັນ ທີ່ບັນລະຍາຍຢູ່ໃນສີພິມນີ້ ແມ່ນເປັນຂອງຜູ້ຂຽນ ຊຶ່ງບໍ່ກ່ຽວຂ້ອງກັບກະຊວງແຜນການ ແລະ ການລົງທຶນ ຢູ່ ສປປ ລາວ